ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເລກທີ 003 ປປທ
ລົງວັນທີ 09 ຕຸລາ 2023

# ລັດຖະບັນຍັດ
# ຂອງປະທານປະເທດ
## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
## ວ່າດ້ວຍການປັບປຸງອັດຕາອາກອນຊົມໃຊ້ຂອງບາງປະເພດສິນຄ້າ

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 63/ສພຊ, ລົງວັນທີ 8 ທັນວາ 2015;
- ອີງຕາມ ກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍກ່ຽວກັບສ່ວຍສາອາກອນ ສະບັບເລກທີ 01/ສພຊ, ລົງວັນທີ 7 ສິງຫາ 2021;
- ອີງຕາມ ມະຕິຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 286/ຄປຈ, ລົງວັນທີ 25 ກັນຍາ 2023;
- ອີງຕາມ ໜັງສືສະເໜີ ຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 30/ຄປຈ, ລົງວັນທີ 25 ກັນຍາ 2023.

**ປະທານປະເທດ**
**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະບັນຍັດ:**

**ມາດຕາ 1 ຈຸດປະສົງ**

ລັດຖະບັນຍັດສະບັບນີ້ ກຳນົດ ເພີ່ມອັດຕາອາກອນຊົມໃຊ້ຂອງບາງປະເພດສິນຄ້າ ທີ່ຖືກເສຍອາກອນຊົມໃຊ້ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍກ່ຽວກັບສ່ວຍສາອາກອນ ໂຮແມ່ງ IV ກົດໝາຍວ່າດ້ວຍອາກອນຊົມໃຊ້ ມາດຕາ 15 ອັດຕາອາກອນຊົມໃຊ້ ເປັນການນຳໃຊ້ຊົ່ວຄາວ ຈົນກວ່າຈະມີການປັບປຸງກົດໝາຍວ່າດ້ວຍອາກອນຊົມໃຊ້ ເພື່ອເປັນມາດຕະການຫຼຸດຜ່ອນການໄຫຼອອກຂອງເງິນຕາຕ່າງປະເທດ, ເພີ່ມທະວີການປະຢັດ, ຕ້ານການຟູມເຟືອຍ ແລະ ຮັບປະກັນການຈັດເກັບລາຍຮັບຈາກອາກອນຊົມໃຊ້ເຂົ້າງົບປະມານແຫ່ງລັດ ໃຫ້ຖືກຕ້ອງ, ຄົບຖ້ວນ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ.

**ມາດຕາ 2 ປະເພດສິນຄ້າທີ່ປັບປຸງອັດຕາອາກອນຊົມໃຊ້**

ສິນຄ້າທີ່ຖືກເສຍອາກອນຊົມໃຊ້ ທີ່ໄດ້ມີການປັບປຸງອັດຕາອາກອນຊົມໃຊ້ ມີປະເພດສິນຄ້າ ດັ່ງນີ້:

1. ພາຫະນະ ທີ່ນຳໃຊ້ນ້ຳມັນເຊື້ອໄຟ (ສະເພາະລົດຈິບ ແລະ ລົດເກັງ);
2. ເຫຼົ້າ ຫຼື ເຄື່ອງດື່ມທີ່ມີທາດເຫຼົ້າ;
3. ເບຍ;
4. ຢາສູບ;
5. ເຄື່ອງດື່ມສຳເລັດຮູບ;
6. ຕູ້ເກມຢອດຫຼຽນ, ເຄື່ອງຫຼິ້ນເກມທຸກຊະນິດ ແລະ ເຄື່ອງຫຼິ້ນເກມການພະນັນທຸກຊະນິດ ໂດຍໄດ້ຮັບອະນຸຍາດຢ່າງຖືກຕ້ອງ.

**ມາດຕາ 3 ອັດຕາອາກອນຊົມໃຊ້**

ປະເພດສິນຄ້າທີ່ຖືກເສຍອາກອນຊົມໃຊ້ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍກ່ຽວກັບສ່ວຍສາອາກອນ ໂຮແມ້ງ IV ກົດໝາຍວ່າດ້ວຍອາກອນຊົມໃຊ້ ມາດຕາ 15 ອັດຕາອາກອນຊົມໃຊ້ ໄດ້ມີການປັບປຸງອັດຕາຂອງບາງລາຍການ ດັ່ງນີ້:

| ລ/ດ | ລາຍການສິນຄ້າ | ອັດຕາອາກອນຊົມໃຊ້ |
|---|---|---|
| 1 | ພາຫະນະ ທີ່ນຳໃຊ້ນ້ຳມັນເຊື້ອໄຟ (ສະເພາະລົດຈິບ ແລະ ລົດເກັງ): | |
| | - ແຕ່ 1.000 ເຊເຊ ລົງມາ | 31% |
| | - ເກີນ 1.000 ຫາ 1.600 ເຊເຊ | 41% |
| | - ເກີນ 1.600 ຫາ 2.000 ເຊເຊ | 56% |
| | - ເກີນ 2.000 ຫາ 2.500 ເຊເຊ | 66% |
| | - ເກີນ 2.500 ຫາ 3.000 ເຊເຊ | 82% |
| | - ເກີນ 3.000 ຫາ 4.000 ເຊເຊ | 127% |
| | - ເກີນ 4.000 ຫາ 5.000 ເຊເຊ | 200% |
| | - ເກີນ 5.000 ເຊເຊ | 220% |
| 2 | ເຫຼົ້າ ຫຼື ເຄື່ອງດື່ມທີ່ມີທາດເຫຼົ້າ: | |
| | - ເຫຼົ້າ ຫຼື ເຄື່ອງດື່ມທີ່ມີທາດເຫຼົ້າ ເກີນ 23% | 110% |
| | - ເຫຼົ້າ ຫຼື ເຄື່ອງດື່ມທີ່ມີທາດເຫຼົ້າ ແຕ່ 23% ລົງມາ ຫາ 10% | 90% |
| | - ເຫຼົ້າ ຫຼື ເຄື່ອງດື່ມທີ່ມີທາດເຫຼົ້າ ຕ່ຳກວ່າ 10% | 72% |
| 3 | ເບຍ: | |
| | - ເບຍທີ່ມີທາດເຫຼົ້າ ເກີນ 5% ຂຶ້ນໄປ | 70% |
| | - ເບຍທີ່ມີທາດເຫຼົ້າ ແຕ່ 0,5% ຫາ 5% | 60% |
| 4 | ປະເພດຢາສູບ: | |
| | - ຢາຊີກາ, ຢາສູບເປັນກອກ ຫຼື ເປັນຊອງ ແລະ ຢາສູບປະເພດອື່ນ | 72% |
| | - ຢາເສັ້ນ | 47% |

| | | |
|---|---|---|
| 5 | ປະເພດເຄື່ອງດື່ມສຳເລັດຮູບ: | |
| | - ນ້ຳອັດລົມ, ນ້ຳໂຊດາ ແລະ ເຄື່ອງດື່ມຄ້າຍຄຽງ<br>- ເຄື່ອງດື່ມຊຸກຳລັງ | 12%<br>17% |
| 6 | ຕູ້ເກມຢອດຫຼຽນ, ເຄື່ອງຫຼິ້ນເກມທຸກຊະນິດ ແລະ ເຄື່ອງຫຼິ້ນເກມການພະນັນທຸກຊະນິດ ໂດຍໄດ້ຮັບອະນຸຍາດຢ່າງຖືກຕ້ອງ | 50% |

ສ່ວນປະເພດສິນຄ້າ ແລະ ການບໍລິການອື່ນທີ່ຖືກເສຍອາກອນຊົມໃຊ້ ຊຶ່ງບໍ່ໄດ້ປັບປຸງ ແລະ ເພີ່ມອັດຕາອາກອນຊົມໃຊ້ ໃນລັດຖະບັນຍັດສະບັບນີ້ ແມ່ນໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍກ່ຽວກັບສ່ວຍສາອາກອນ ໂຮແມ່ງ IV ກົດໝາຍວ່າດ້ວຍອາກອນຊົມໃຊ້ ມາດຕາ 15 ອັດຕາອາກອນຊົມໃຊ້.

**ມາດຕາ 4 ການຈັດຕັ້ງປະຕິບັດ**

ລັດຖະບານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດລັດຖະບັນຍັດສະບັບນີ້.

**ມາດຕາ 5 ຜົນສັກສິດ**

ລັດຖະບັນຍັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນ ປະທານປະເທດ ລົງລາຍເຊັນ ເປັນຕົ້ນໄປ.

**ປະທານປະເທດ ແຫ່ງ ສປປ ລາວ**

ປະທານປະເທດ (ຕາປະທັບ)

**ທອງລຸນ ສີສຸລິດ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ເລກທີ 4172/ກງ

ນະຄອນຫຼວງວຽງຈັນ, ວັນທີ 22 ທັນວາ 2023

# ແຈ້ງການ

ເຖິງ: ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ດຳເນີນທຸລະກິດ ລວມທັງນິຕິບຸກຄົນ ທີ່ບໍ່ມີພູມລຳເນົາທີ່ເຂົ້າມາເຄື່ອນໄຫວມີລາຍຮັບຢູ່ ສປປ ລາວ ແລະ ຜູ້ຊົມໃຊ້ສິນຄ້າ ໃນຂອບເຂດທົ່ວປະເທດ.

ເລື່ອງ: ການຈັດຕັ້ງ ລັດຖະບັນຍັດ ຂອງປະທານປະເທດ ສະບັບເລກທີ 003/ປປທ, ລົງວັນທີ 09 ຕຸລາ 2023 ວ່າດ້ວຍການປັບປຸງອັດຕາອາກອນຊົມໃຊ້ຂອງບາງປະເພດສິນຄ້າ.

- ອີງຕາມ ກົດໝາຍວ່າດ້ວຍ ສ່ວຍສາອາກອນ (ສະບັບປັບປຸງ) ເລກທີ 66/ສພຊ, ລົງວັນທີ 17 ມິຖຸນາ 2019;
- ອີງຕາມ ກົດໝາຍວ່າດ້ວຍ ອາກອນຊົມໃຊ້ ສະບັບເລກທີ 68/ສພຊ, ລົງວັນທີ 19 ມິຖຸນາ 2019;
- ອີງຕາມ ກົດໝາຍວ່າດ້ວຍ ການປັບປຸງບາງມາດຕາ ຂອງກົດໝາຍກ່ຽວກັບສ່ວຍສາອາກອນ ສະບັບເລກທີ 01/ສພຊ, ລົງວັນທີ 07 ສິງຫາ 2021;
- ອີງຕາມ ລັດຖະບັນຍັດຂອງປະທານປະເທດ ວ່າດ້ວຍການປັບປຸງອັດຕາອາກອນຊົມໃຊ້ຂອງບາງປະເພດສິນຄ້າ ສະບັບເລກທີ 003/ປປທ, ລົງວັນທີ 09 ຕຸລາ 2023;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງການເງິນ ສະບັບເລກທີ 600/ນຍ, ລົງວັນທີ 14 ຕຸລາ 2021;
- ອີງຕາມ ໜັງສືສະເໜີຂອງກົມສ່ວຍສາອາກອນ ສະບັບເລກທີ 8386/ກສອ, ລົງວັນທີ 18 ທັນວາ 2023.

## 1. ຈຸດປະສົງ:

ເພື່ອ ຜັນຂະຫຍາຍ ລັດຖະບັນຍັດຂອງປະທານປະເທດ ສະບັບເລກທີ 003/ປປທ, ລົງວັນທີ 09 ຕຸລາ 2023 ວ່າດ້ວຍການປັບປຸງອັດຕາອາກອນຊົມໃຊ້ຂອງບາງປະເພດສິນຄ້າ ຕິດພັນກັບການປັບປຸງອັດຕາສິນຄ້າບາງປະເພດ ເພື່ອໃຫ້ຖືກຕ້ອງ, ສອດຄ່ອງຕາມເງື່ອນໄຂ ທີ່ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ໄດ້ກຳນົດ.

## 2. ເປົ້າໝາຍນຳໃຊ້:

1) ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ດຳເນີນທຸລະກິດ ຢູ່ໃນລະບົບອາກອນມູນຄ່າເພີ່ມ ທີ່ມີການນຳເຂົ້າສິນຄ້າ ຈາກຕ່າງປະເທດ/ເຂດເສດຖະກິດພິເສດ ແລະ ການຜະລິດເປັນສິນຄ້າຢູ່ພາຍໃນປະເທດ;

2) ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ບໍ່ໄດ້ດຳເນີນທຸລະກິດ ທີ່ມີການນຳເຂົ້າສິນຄ້າ ຈາກ ຕ່າງປະເທດ/ເຂດເສດຖະກິດພິເສດ ແລະ ຊົມໃຊ້ສິນຄ້າຈາກຜູ້ຜະລິດ ຢູ່ພາຍໃນປະເທດ;

3) ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງດຳເນີນທຸລະກິດ ແລະ ບໍ່ດຳເນີນທຸລະກິດ ທີ່ມີການຊົມໃຊ້ສິນຄ້າຈາກຜູ້ບໍ່ມີພູມລຳເນົາ ແລະ ບໍ່ໄດ້ສ້າງຕັ້ງຢູ່ ສປປ ລາວ.

## 3. ປະເພດສິນຄ້າທີ່ມີການປັບປຸງອັດຕາອາກອນຊົມໃຊ້ ແລະ ອັດຕາອາກອນຊົມໃຊ້ ທີ່ມີການປັບປຸງ:

ສິນຄ້າທີ່ມີການປັບປຸງອັດຕາອາກອນຊົມໃຊ້ ແລະ ອັດຕາອາກອນຊົມໃຊ້ ທີ່ມີການປັບປຸງ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 2 ແລະ ມາດຕາ 3 ລັດຖະບັນຍັດຂອງປະທານປະເທດ ສະບັບເລກທີ 003/ປປທ, ລົງວັນທີ 09 ຕຸລາ 2023 ວ່າດ້ວຍການປັບປຸງອັດຕາອາກອນຊົມໃຊ້ຂອງບາງປະເພດສິນຄ້າ ມີດັ່ງນີ້:

| ລຳດັບ | ລາຍການສິນຄ້າ | ອັດຕາອາກອນ | ໝາຍເຫດ |
|---|---|---|---|
| **1.** | **ພາຫະນະ ທີ່ນຳໃຊ້ນ້ຳມັນເຊື້ອໄຟ (ສະເພາະ ລົດຈິບ ແລະ ລົດເກັ່ງ):** | | |
| | - ແຕ່ 1.000 ເຊເຊ ລົງມາ; | 31% | |
| | - ເກີນ 1.000 ເຊເຊ ຫາ 1.600 ເຊເຊ; | 41% | |
| | - ເກີນ 1.600 ເຊເຊ ຫາ 2.000 ເຊເຊ; | 56% | |
| | - ເກີນ 2.000 ເຊເຊ ຫາ 2.500 ເຊເຊ; | 66% | |
| | - ເກີນ 2.500 ເຊເຊ ຫາ 3.000 ເຊເຊ; | 82% | |
| | - ເກີນ 3.000 ເຊເຊ ຫາ 4.000 ເຊເຊ; | 127% | |
| | - ເກີນ 4.000 ເຊເຊ ຫາ 5.000 ເຊເຊ; | 200% | |
| | - ເກີນ 5.000 ເຊເຊ. | 220% | |
| **2.** | **ເຫຼົ້າ ຫຼື ເຄື່ອງດື່ມທີ່ມີທາດເຫຼົ້າ:** | | |
| | - ເຫຼົ້າ ຫຼື ເຄື່ອງດື່ມທີ່ມີທາດເຫຼົ້າ ເກີນ 23%; | 110% | |
| | - ເຫຼົ້າ ຫຼື ເຄື່ອງດື່ມທີ່ມີທາດເຫຼົ້າ ແຕ່ 23% ລົງມາຫາ 10%; | 90% | |
| | - ເຫຼົ້າ ຫຼື ເຄື່ອງດື່ມທີ່ມີທາດເຫຼົ້າ ຕ່ຳກວ່າ 10%. | 72% | |
| **3.** | **ເບຍ:** | | |
| | - ເບຍທີ່ມີທາດເຫຼົ້າ ເກີນ 5% ຂຶ້ນໄປ; | 70% | |
| | - ເບຍທີ່ມີທາດເຫຼົ້າ 0,5% ຫາ 5%. | 60% | |
| **4.** | **ຢາສູບ:** | | |
| | - ຢາຊີກາ, ຢາສູບເປັນກອກ ຫຼື ເປັນຊອງ ແລະ ຢາສູບປະເພດອື່ນ; | 72% | |
| | - ຢາເສັ້ນ. | 47% | |
| **5.** | **ເຄື່ອງດື່ມສຳເລັດຮູບ:** | | |
| | - ນ້ຳອັດລົມ, ນ້ຳໂຊດາ ແລະ ເຄື່ອງດື່ມຄ້າຍຄຽງ; | 12% | |
| | - ເຄື່ອງດື່ມຊູກຳລັງ. | 17% | |
| **6.** | ຕູ້ເກມຍອດຫຼຽນ, ເຄື່ອງຫຼິ້ນເກມທຸກປະເພດ ແລະ ເຄື່ອງຫຼິ້ນການພະນັນທຸກຊະນິດ ໂດຍໄດ້ຮັບອະນຸຍາດຢ່າງຖືກຕ້ອງ. | 50% | |

ສິນຄ້າປະເພດອື່ນ ທີ່ບໍ່ກຳນົດໄວ້ໃນລັດຖະບັນຍັດ ຂອງປະທານປະເທດ ສະບັບເລກທີ 003/ປປທ, ລົງວັນທີ 09 ຕຸລາ 2023 ແມ່ນໃຫ້ປະຕິບັດຕາມກົດໝາຍວ່າດ້ວຍອາກອນຊົມໃຊ້ ສະບັບເລກທີ 68/ສພຊ, ລົງວັນທີ 19 ມິຖຸນາ 2019 ແລະ ກົດໝາຍວ່າດ້ວຍ ການປັບປຸງບາງມາດຕາຂອງກົດໝາຍກ່ຽວກັບສ່ວຍສາອາກອນ ສະບັບເລກທີ 01/ສພຊ, ລົງວັນທີ 07 ສິງຫາ 2021 ຊຶ່ງກຳນົດໄວ້ໃນໂລແມັງ IV ມາດຕາ 15.

**4. ມາດຕະການ ຈັດຕັ້ງປະຕິບັດ:**

1) ໃຫ້ກົມສ່ວຍສາອາກອນ ປັບປຸງລະບົບ Tax RIS ແລະ ກົມພາສີ ປັບປຸງລະບົບ ASYCUDA ໃຫ້ສອດຄ່ອງ ຕາມລັດຖະບັນຍັດຂອງປະທານປະເທດ ສະບັບເລກທີ 003/ປປທ, ລົງວັນທີ 09 ຕຸລາ 2023 ປະຕິບັດຕາມກົດໝາຍວ່າດ້ວຍອາກອນຊົມໃຊ້ ສະບັບເລກທີ 68/ສພຊ, ລົງວັນທີ 19 ມິຖຸນາ 2021 ແລະ ກົດໝາຍວ່າດ້ວຍ ການປັບປຸງບາງມາດຕາຂອງກົດໝາຍກ່ຽວກັບສ່ວຍສາອາກອນ ສະບັບເລກທີ 01/ສພຊ, ລົງວັນທີ 07 ສິງຫາ 2021;
2) ໃຫ້ກົມສ່ວຍສາອາກອນ ສ້າງແຜນຈັດຕັ້ງ ເຜີຍແຜ່, ແນະນຳ ເນື້ອໃນແຈ້ງການສະບັບນີ້ ໃຫ້ແກ່ເປົ້າໝາຍຕາມທີ່ໄດ້ກຳນົດໄວ້ໃນ ຂໍ້ທີ 1 ຂອງ ແຈ້ງການ ສະບັບນີ້ ໄດ້ຮັບຮູ້, ເຂົ້າໃຈ ແລະ ເປັນເອກະພາບໃນການຈັດຕັ້ງປະຕິບັດ;

3) ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທຸກພາກສ່ວນ ຕ້ອງປະຕິບັດຕາມເນື້ອໃນແຈ້ງການສະບັບນີ້ຢ່າງເຂັ້ມງວດ. ກໍລະນີ ຫາກລະເມີດຈະຖືກປະຕິບັດມາດຕະການ ຕາມທີ່ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ທີ່ກ່ຽວຂ້ອງໄດ້ກຳນົດ.

**5.** ນັບແຕ່ 01 ມັງກອນ 2024 ເປັນຕົ້ນໄປ ໃຫ້ຈັດຕັ້ງປະຕິບັດ ລັດຖະບັນຍັດຂອງປະທານປະເທດ ສະບັບເລກທີ 003/ປປທ, ລົງວັນທີ 09 ຕຸລາ 2023 ວ່າດ້ວຍ ການປັບປຸງອັດຕາອາກອນຊົມໃຊ້ຂອງບາງປະເພດສິນຄ້າ ຢ່າງເປັນເອກະພາບໃນຂອບເຂດທົ່ວປະເທດ.

ດັ່ງນັ້ນ, ຈຶ່ງແຈ້ງມາເພື່ອຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດ ໃຫ້ໄດ້ຮັບຜົນດີ.

**ລັດຖະມົນຕີ**

ສັນຕິພາບ ພົມວິຫານ